ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ: 028 /ບຊລ

ທີ່ນະຄອນຫຼວງວຽງຈັນ, ວັນທີ: 11 /11/ 2024

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ.

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 2 ປີ 2024.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊີມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ບໍລິສັດ ຊີມັງລາວ ມະຫາຊົນ (ບລຊ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ນັບແຕ່ບໍລິສັດໄດ້ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ຍັງບໍ່ທັນສຳເລັດເນື່ອງຈາກວ່າເງິນທຶນຍັງບໍ່ທັນມີຄາດວ່າຈະສຳເລັດພາຍໃນທ້າຍ 2024.
2. ໂຄງການກໍ່ສ້າງສອນສາທິດເສດຖະກິດອຸດສາຫະກຳທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງ ແມ່ນຢູ່ໃນຂັ້ນຕອນການສະສາງຊັບສິນບັດ ແລະ ເລີ່ມລົງມືກໍ່ສ້າງຂັ້ນພື້ນຖານ.
3. ສຳລັບໂຄງການກໍ່ສ້າງຕຶກສຳນັກງານ ບໍລິສັດ ໄດ້ສຳເລັດໂຄງສ້າງຮອດ 15 ຊັ້ນແລ້ວ.
4. ເນື່ອງຈາກວ່າສະພາບການເງິນຂອງບໍລິສັດ ຍັງບໍ່ທັນມີລາຍຮັບ ສະນັ້ນ, ການຈ່າຍເງິນອຸດໜູນ ອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ທີ່ຍັງເຫຼືອອີກຈຳນວນ 35% ທີ່ທາງບໍລິສັດຈະໄດ້ຈ່າຍນັ້ນແມ່ນຍັງບໍ່ທັນສຳລັດຕາມຄາດໝາຍ ແລະຄາດວ່າຈະໃຫ້ສຳເລັດໄວທີ່ສຸດເທົ່າທີ່ຈະໄວໄດ້.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ເນ້ຍເຫຼຽ